ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງ ອຸດສາຫະກຳ ແລະ ການຄ້າ

ເລກທີ 2037 /ອຄ.

ນະຄອນຫລວງວຽງຈັນ, ວັນທີ 12 ຕຸລາ 2010.

# ຂໍ້ຕົກລົງ

## ວ່າດ້ວຍເຈົ້າໜ້າທີ່ກວດກາໂຮງງານ

- ອີງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ເລກທີ 01/99/ສພຊ, ລົງວັນທີ 3/4/99.
- ອີງຕາມດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ເລກທີ 67/ນຍ, ລົງວັນທີ 12/4/06.
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 188/ນຍ, ລົງວັນທີ 17/8/06.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

### ໝວດທີ 1
### ຫລັກການທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ວາງອອກ ເພື່ອກຳນົດຫລັກການ, ພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງເຈົ້າໜ້າທີ່ກວດກາໂຮງງານ ຕາມມາດຕາ 48, 49 ແລະ ມາດຕາ 50 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ເພື່ອແນໃສ່ການປະຕິບັດວຽກງານຄຸ້ມຄອງ ແລະ ກວດກາ ການສ້າງຕັ້ງ, ການດຳເນີນກິດຈະການໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ທຸກປະເພດ ແລະ ທຸກຂະໜາດ ໃຫ້ເຄື່ອນໄຫວກິດຈະການ ມີປະສິດທິຜົນ, ມີຄວາມເປັນລະບຽບຮຽບຮ້ອຍດີ ໂດຍສອດຄ່ອງກັບເປົ້າໝາຍຂອງການອະນຸບາດ ແລະ ຖືກຕ້ອງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ ແລະ ລະບຽບກົດໝາຍ ທີ່ກ່ຽວຂ້ອງ.

**ມາດຕາ 2. ຄວາມໝາຍຂອງຄຳສັບ**

1. ເຈົ້າໜ້າທີ່ກວດກາໂຮງງານ ໝາຍເຖິງ ພະນັກງານ, ວິຊາການ ທີ່ໄດ້ຮັບການຕົກລົງແຕ່ງຕັ້ງຈາກລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ຕາມການສະເໜີຂອງກົມອຸດສາຫະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ ແລະ ຫ້ອງການ ອຸດສາຫະກຳ ແລະ ການຄ້າເມືອງ ເພື່ອປະຕິບັດວຽກງານຄຸ້ມຄອງ ແລະ ກວດກາໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ທຸກປະເພດ ແລະ ທຸກຂະໜາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ.

2. ບັດເຈົ້າໜ້າທີ່ກວດກາໂຮງງານ ໝາຍເຖິງ ບັດຂອງເຈົ້າໜ້າທີ່ກວດກາໂຮງງານ ເພື່ອນຳໃຊ້ສະເພາະໃນການລົງກວດກາສະພາບການເຄື່ອນໄຫວຂອງໂຮງງານ, ເງື່ອນໄຂ ມາດຕະຖານໂຮງງານ ທຸກປະເພດ ແລະ ທຸກຂະໜາດ ຕາມຮູບການກວດກາທີ່ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້.

### ມາດຕາ 3. ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ເພື່ອຄຸ້ມຄອງ, ກວດກາ ແລະ ຕິດຕາມ ການເຄື່ອນໄຫວກິດຈະການໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ທຸກປະເພດ, ທຸກລະດັບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ແລະ ມາດຕາ 10 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ.

## ໝວດທີ 2
## ທີ່ຕັ້ງ ແລະ ໂຄງປະກອບບຸກຄະລະກອນ

### ມາດຕາ 4. ທີ່ຕັ້ງ

ໜ່ວຍງານເຈົ້າໜ້າທີ່ກວດກາໂຮງງານ ຂັ້ນກະຊວງ ແມ່ນພາກສ່ວນໜຶ່ງໃນໂຄງປະກອບກົງຈັກຂອງກົມອຸດສາຫະກຳ ແລະ ບັນຈຸຢູ່ໃນພະແນກຄຸ້ມຄອງ ແລະ ສົ່ງເສີມອຸດສາຫະກຳ ຂຽນຫຍໍ້ວ່າ " ຈກອ " ແລະ ຂຽນເປັນພາສາສາກົນວ່າ Industrial Inspector Unit ຂຽນຫຍໍ້ວ່າ " IIU ".

ໜ່ວຍງານເຈົ້າໜ້າທີ່ກວດກາໂຮງງານ ຂັ້ນພະແນກ ແມ່ນພາກສ່ວນໜຶ່ງໃນໂຄງປະກອບກົງຈັກຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ແລະ ບັນຈຸຢູ່ໃນຂະແໜງຄຸ້ມຄອງອຸດສາຫະກຳ ແລະ ຂະແໜງອື່ນທີ່ເຫັນວ່າມີຄວາມຈຳເປັນ.

ໜ່ວຍງານເຈົ້າໜ້າທີ່ກວດກາໂຮງງານ ຂັ້ນຫ້ອງການ ແມ່ນພາກສ່ວນໜຶ່ງໃນໂຄງປະກອບກົງຈັກຂອງຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ.

### ມາດຕາ 5. ໂຄງປະກອບບຸກຄະລະກອນ

ເຈົ້າໜ້າທີ່ກວດກາໂຮງງານ ປະກອບມີຂັ້ນກະຊວງ, ຂັ້ນພະແນກ ແລະ ຂັ້ນຫ້ອງການ ຊຶ່ງໄດ້ຮັບການແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ຕາມການສະເໜີຂອງກົມອຸດສາຫະກຳ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ. ບຸກຄະລະກອນ ທີ່ປະກອບເຂົ້າສັງກັດໃນໜ່ວຍງານກວດກາໂຮງງານ ມີດັ່ງນີ້:

1. ຂັ້ນກະຊວງ ປະກອບມີເຈົ້າໜ້າທີ່ກວດກາໂຮງງານ ຢ່າງນ້ອຍ 5-8 ຄົນ, ໂດຍຂຶ້ນກັບກົມອຸດສາຫະກຳ.

2. ຂັ້ນພະແນກ ປະກອບມີເຈົ້າໜ້າທີ່ກວດກາໂຮງງານ ຢ່າງນ້ອຍ 3-5 ຄົນ, ໂດຍ ຂຶ້ນກັບຂະແໜງ ຫລື ຫ້ອງການຄຸ້ມຄອງອຸດສາຫະກຳ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ.

3. ຂັ້ນຫ້ອງການ ປະກອບມີເຈົ້າໜ້າທີ່ກວດກາໂຮງງານ ຢ່າງນ້ອຍ 2-3 ຄົນ, ໂດຍຂຶ້ນກັບຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ.

### ມາດຕາ 6. ມາດຖານ ແລະ ເງື່ອນໄຂຂອງບຸກຄະລະກອນ

ເຈົ້າໜ້າທີ່ກວດກາໂຮງງານ ຕ້ອງປະກອບມີມາດຖານ ແລະ ເງື່ອນໄຂ ຄືດັ່ງນີ້:

1. ຕ້ອງເປັນລັດຖະກອນສົມບູນ, ອາຍຸການເຮັດວຽກໃນຂະແໜງການອຸດສາຫະກຳ 3 ປີຂຶ້ນໄປ.

2. ຕ້ອງມີຄຸນສົມບັດ ສິນທຳປະຕິວັດ, ສັດຊື່ຕໍ່ໜ້າທີ່ວຽກງານຂອງຕົນ.

3. ຕ້ອງມີວິຊາສະເພາະດ້ານ ກົນຈັກ, ໄຟຟ້າ, ກໍ່ສ້າງ, ສິ່ງແວດລ້ອມ ຫລື ວິຊາສະເພາະອື່ນທີ່ໃກ້ຄຽງ. ໃນນີ້, ລະດັບຊັ້ນກາງຂຶ້ນໄປ ສຳລັບຂັ້ນເມືອງ, ຊັ້ນສູງຂຶ້ນໄປສຳລັບຂັ້ນພະແນກ ແລະ ປະລິນຍາຕີຂຶ້ນໄປ ສຳລັບຂັ້ນກະຊວງ.

4. ຕ້ອງມີຄວາມສາມາດ, ມີຄວາມສຳນິສຳນານໃນການເຮັດວຽກຄຸ້ມຄອງໂຮງງານອຸດສາຫະກຳ.

5. ຕ້ອງເຂົ້າໃຈແຈ້ງຕໍ່ເນື້ອໃນ ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ, ບັນດາລະບຽບການ ດ້ານເຕັກນິກໃນການຄຸ້ມຄອງໂຮງງານ ແລະ ລະບຽບກົດໝາຍອື່ນໆທີ່ກ່ຽວຂ້ອງ.

6. ຕ້ອງເປັນຜູ້ທີ່ມີຄວາມຫ້າວຫັນ ແລະ ມີສຸຂະພາບແຂງແຮງດີ.

## ໝວດທີ 3

## ໜ້າທີ່ ແລະ ສິດ ຂອງເຈົ້າໜ້າທີ່ກວດກາໂຮງງານ ແລະ ຜູ້ດຳເນີນກິດຈະການໂຮງງານ

### ມາດຕາ 7. ໜ້າທີ່ ແລະ ສິດ ຂອງເຈົ້າໜ້າທີ່ກວດກາໂຮງງານ

ເຈົ້າໜ້າທີ່ກວດກາໂຮງງານ ມີໜ້າທີ່ ແລະ ສິດ ໃນການປະຕິບັດການກວດກາໂຮງງານ ດັ່ງນີ້:

1. ມີສິດເຂົ້າໄປໃນທຸກສະຖານທີ່ ທີ່ດຳເນີນກິດຈະການໂຮງງານອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ ທຸກປະເພດ ແລະ ທຸກຂະໜາດ ລວມທັງສະຖານທີ່ການຜະລິດ, ປະກອບ, ບັນຈຸ, ຫຸ້ມຫໍ່ ຫລື ໂຮງງານທີ່ມີໃບອະນຸຍາດ ແລະ ບໍ່ມີໃບອະນຸຍາດດຳເນີນກິດຈະການໂຮງງານ. ເພື່ອກວດກາ ການອະນຸຍາດສ້າງຕັ້ງ, ການດຳເນີນກິດຈະການ, ການຂະຫຍາຍກິດຈະການ, ສະພາບການເຄື່ອນໄຫວຂອງໂຮງງານ, ການນຳເຂົ້າວັດຖຸດິບ, ສາງວັດຖຸດິບ, ມາດຕະຖານເຕັກນິກຂອງອາຄານໂຮງງານ, ເຄື່ອງຈັກ, ອຸປະກອນ ແລະ ຂະບວນການຜະລິດ, ການຫຸ້ມຫໍ່, ຜະລິດຕະພັນສຳເລັດຮູບ, ສາງຜະລິດຕະພັນ, ມາດຕະຖານຜະລິດຕະພັນ, ຄວາມປອດໄພ, ສຸຂະອະນາໄມ, ການນຳໃຊ້ແຮງງານ, ດ້ານສິ່ງແວດລ້ອມໂຮງງານ, ການປະຕິບັດສິດ ແລະ ພັນທະຂອງຜູ້ດຳເນີນກິດຈະການໂຮງງານ ແລະ ອື່ນໆ ຕາມທີ່ກຳນົດໄວ້ໃນມາດຕາ 14, 41 ແລະ 42 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ.

2. ໃຫ້ຄຳແນະນຳ ຕັກເຕືອນເຈົ້າຂອງໂຮງງານປະຕິບັດໃຫ້ຖືກຕ້ອງ ຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ ແລະ ລະບຽບກົດໝາຍ ທີ່ກ່ຽວຂ້ອງ.

3. ນຳເອົາຕົວຢ່າງຜະລິດຕະພັນຂອງໂຮງງານ ທີ່ສົງໄສວ່າເປັນສາເຫດທີ່ພາໃຫ້ເກີດຄວາມເສັຍຫາຍຕໍ່ຊັບສິນຂອງລັດ, ລວມໝູ່, ທຸລະກິດອື່ນ ແລະ ບຸກຄົນ ຫລື ບໍ່ມີຄວາມປອດໄພແກ່ຜູ້ຊົມໃຊ້ ເພື່ອມາວິໄຈ ແລະ ກວດສອບ ສ່ວນປະກອບ ພ້ອມດ້ວຍສຳເນົາເອກະສານທີ່ມີສ່ວນກ່ຽວຂ້ອງເພື່ອເປັນຂໍ້ມູນໃນການພິຈາລະນາ.

4. ໃສ່ກະແຈ ຫລື ໜີບກົ່ວໃສ່ເຄື່ອງຈັກ ຫລື ສະເໜີບໍລິສັດໄຟຟ້າຕັດກະແສໄຟຟ້າເຂົ້າເຄື່ອງຈັກ ເພື່ອບໍ່ໃຫ້ເຄື່ອງຈັກສາມາດແລ່ນໄດ້, ໃນກໍລະນີໂຮງງານຫາກບໍ່ປະຕິບັດຕາມຂໍ້ 7 ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້, ໂດຍການຕົກລົງຂອງຫົວໜ້າກົມອຸດສາຫະກຳ ຫລື ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ.

5. ຍຶດ ຫລື ອາຍັດ ເຄື່ອງຈັກ, ອຸປະກອນການຜະລິດ ທີ່ລັກລອບເຂົ້າມາຕິດຕັ້ງຢູ່ໃນໂຮງງານໂດຍບໍ່ໄດ້ຮັບອະນຸຍາດ; ວັດຖຸດິບ ທີ່ນຳເຂົ້າໂຮງງານບໍ່ຖືກຕ້ອງ, ຜະລິດຕະພັນ ທີ່ບໍ່ຖືກຕ້ອງຕາມເປົ້າໝາຍຂອງ

ການຜະລິດ ແລະ ອື່ນໆ ທີ່ພາໃຫ້ເກີດອັນຕະລາຍ ຫລື ສ້າງຜົນກະທົບດ້ານຕ່າງໆ ແລະ ເສຍຫາຍ ແກ່ຊັບສິນຂອງລັດ, ລວມໝູ່, ທຸລະກິດອື່ນ ແລະ ບຸກຄົນ ຢ່າງຮ້າຍແຮງ, ໂດຍການຕົກລົງຂອງຫົວໜ້າກົມອຸດສາຫະກຳ ຫລື ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ.

6. ຂຶ້ນແຜນການກວດກາປະຈຳເດືອນ, ປະຈຳງວດ ແລະ ປະຈຳປີ ເພື່ອອຳນວຍຄວບຄຸມ ແລະ ຕິດຕາມການເຄື່ອນໄຫວກິດຈະການໂຮງງານ ຢ່າງຕໍ່ເນື່ອງ.

7. ລາຍງານຜົນການກວດກາ ແລະ ຄົ້ນຄວ້າ ສະເໜີວິທີການ, ມາດຕະການແກ້ໄຂ ລາຍງານຕໍ່ຫົວໜ້າກົມອຸດສາຫະກຳ ຫລື ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ເພື່ອພິຈາລະນາ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອອກແຈ້ງການໃຫ້ໂຮງງານຢຸດເຊົາຊົ່ວຄາວ, ເພື່ອປັບປຸງ, ແກ້ໄຂ ຫລື ສ້ອມແປງໂຮງງານ, ເຄື່ອງຈັກ ແລະ ອຸປະກອນ ຫລື ສິ່ງທີ່ສ້າງຜົນກະທົບດ້ານຕ່າງໆ ເປັນຕົ້ນ ສ້າງບັນຫາລົບກວນ, ສ້າງຄວາມເສຍຫາຍແກ່ຊັບສິນຂອງລັດ, ລວມໝູ່, ທຸລະກິດອື່ນ ແລະ ບຸກຄົນ ຫລື ເປັນອັນຕະລາຍຕໍ່ຊີວິດຂອງຄົນງານ, ເປັນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ອື່ນໆ.

### ມາດຕາ 8. ຂອບເຂດສິດໃນການກວດກາໂຮງງານ

1. ເຈົ້າໜ້າທີ່ກວດກາໂຮງງານຂັ້ນກະຊວງ ມີສິດກວດກາໂຮງງານອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ ທຸກປະເພດ ແລະ ທຸກຂະໜາດ ໃນຂອບເຂດທົ່ວປະເທດ.

2. ເຈົ້າໜ້າທີ່ກວດກາໂຮງງານຂັ້ນພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ ມີສິດກວດກາໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ທຸກປະເພດ ແລະ ທຸກຂະໜາດ ໃນຂອບເຂດແຂວງ, ນະຄອນຫລວງ ທີ່ຕົນຮັບຜິດຊອບ.

3. ເຈົ້າໜ້າທີ່ກວດກາໂຮງງານຂັ້ນຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ ມີສິດກວດກາໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ທຸກປະເພດ ແລະ ທຸກຂະໜາດ ໃນຂອບເຂດເມືອງ ທີ່ຕົນຮັບຜິດຊອບ.

ລາຍລະອຽດໃນການແບ່ງຄວາມຮັບຜິດຊອບ, ສິດ ແລະ ໜ້າທີ່ ຕາມທີ່ກຳນົດໄວ້ໃນມາດຕາ 44, 45, 46 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ, ໃຫ້ປະຕິບັດຕາມຂໍ້ຕົກລົງຂອງກະຊວງ ວ່າດ້ວຍສິດ ແລະ ໜ້າທີ່ ໃນການຄຸ້ມຄອງ ແລະ ກວດກາໂຮງງານອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ ສະບັບເລກທີ 1195/ອຄ, ລົງວັນທີ 19/6/2009.

### ມາດຕາ 9. ໜ້າທີ່ ແລະ ສິດຂອງຜູ້ດຳເນີນກິດຈະການໂຮງງານ

ໃນຂໍ້ຕົກລົງສະບັບນີ້ ຜູ້ດຳເນີນກິດຈະການໂຮງງານ ມີໜ້າທີ່ ແລະ ສິດ ດັ່ງນີ້:

1. ຕ້ອງແຈ້ງໃຫ້ພະນັກງານປ້ອງກັນເວນຍາມປະຕູທາງເຂົ້າ-ອອກຂອງໂຮງງານ ຮັບຮູ້ຕໍ່ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ກວດກາໂຮງງານ; ໃນກໍລະນີເຈົ້າໜ້າທີ່ກວດກາໂຮງງານ ໄດ້ສະແດງບັດເຈົ້າໜ້າທີ່ກວດກາໂຮງງານ ແລະ ສະເໜີຈຸດປະສົງ ຂອງການລົງກວດກາແລ້ວ, ພະນັກງານປ້ອງກັນເວນຍາມປະຕູເຂົ້າ-ອອກ ຂອງໂຮງງານ ຕ້ອງໃຫ້ຄວາມຮ່ວມມື ແລະ ເປີດປະຕູໃຫ້ເຈົ້າໜ້າທີ່ກວດກາໂຮງງານ ເຂົ້າໄປໃນໂຮງງານໂດຍໄວ.

2. ເຈົ້າຂອງໂຮງງານ ຕ້ອງໃຫ້ຄວາມຮ່ວມມື ລາຍງານ, ສະໜອງຂໍ້ມູນທີ່ຖືກຕ້ອງໃນການເຄື່ອນໄຫວກິດຈະການໂຮງງານ ຕາມການສອບຖາມຂອງເຈົ້າໜ້າທີ່ກວດກາໂຮງງານ ເຊັ່ນ: ບົດສະຫລຸບການເຄື່ອນໄຫວ, ແຜນການຜະລິດປະຈຳປີ ຂອງໂຮງງານ ແລະ ອື່ນໆ.

3. ໃນກໍລະນີເຈົ້າຂອງໂຮງງານ ບໍ່ສາມາດເຂົ້າຮ່ວມເຮັດວຽກນໍາເຈົ້າໜ້າທີ່ກວດກາ ຕ້ອງມອບໝາຍສິດ ແລະ ໜ້າທີ່ໃຫ້ຜູ້ຕາງໜ້າ ທີ່ສາມາດສະໜອງຂໍ້ມູນ ແລະ ມີສິດຕັດສິນບັນຫາທີ່ກ່ຽວຂ້ອງກັບການເຄື່ອນໄຫວຂອງໂຮງງານ ແລະ ຕ້ອງມີຜູ້ຕາງໜ້າໜ່ວຍງານຄວາມປອດໄພປະຈໍາໂຮງງານ ເຂົ້າຮ່ວມເຮັດວຽກນໍາ (ຖ້າມີ).

4. ໃນກໍລະນີ ເຈົ້າຂອງໂຮງງານຫາກບໍ່ພໍໃຈຕໍ່ການແນະນໍາ ຫລື ການປະຕິບັດງານຂອງເຈົ້າໜ້າທີ່ກວດກາໂຮງງານ ຕາມມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ເຊັ່ນ: ເວົ້າຈາບໍ່ສຸພາບ, ຂົ່ມຂູ່ໂຮງງານ, ສ້າງຂໍ້ມູນບໍ່ມີຄວາມຈິງ ເພື່ອຜົນປະໂຫຍດແກ່ຕົນເອງ, ບໍ່ປະຕິບັດຕາມກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ຫລື ສ້າງຄວາມເສຍຫາຍ ຕໍ່ຊັບສິນຂອງລັດ, ຜົນປະໂຫຍດຂອງລັດ ແລະ ຂອງໂຮງງານ. ເຈົ້າຂອງໂຮງງານມີສິດສະເໜີຂໍພິຈາລະນາຄືນ ຕໍ່ກົມອຸດສາຫະກໍາ, ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫລວງ ບ່ອນທີ່ໂຮງງານຕັ້ງຢູ່.

## ໝວດທີ 4

## ຮູບການກວດກາ, ຮູບແບບ ແລະ ການນໍາໃຊ້ບັດເຈົ້າໜ້າທີ່ກວດກາໂຮງງານ

### ມາດຕາ 10. ຮູບການກວດກາໂຮງງານ

ການກວດກາໂຮງງານ ແມ່ນດໍາເນີນດ້ວຍ 3 ຮູບການ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 50 ຂອງກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ ຄື:

1. ກວດກາຕາມລະບົບປົກກະຕິ ໝາຍເຖິງ ການກວດກາໂຮງງານຕາມການສະເໜີຂໍອະນຸຍາດດໍາເນີນກິດຈະການໂຮງງານ, ຂະຫຍາຍ ແລະ ຕໍ່ອາຍຸໃບອະນຸຍາດດໍາເນີນກິດຈະການໂຮງງານ ຫລື ກວດກາຕາມແຜນການປະຈໍາເດືອນ, ປະຈໍາງວດ, ປະຈໍາປີ ແລະ ມີກໍານົດເວລາອັນແນ່ນອນ.

2. ກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ໝາຍເຖິງ ການກວດກາໂຮງງານຕາມແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ, ມີຄໍາສັ່ງ ຫລື ມີການຊີ້ນໍາຈາກຂັ້ນເທິງເປັນກໍລະນີສະເພາະ, ໂດຍມີການແຈ້ງໃຫ້ໂຮງງານ ຊາບກ່ອນ.

3. ກວດກາແບບກະທັນຫັນ ໝາຍເຖິງ ການກວດກາໂຮງງານຢ່າງຮີບດ່ວນ ໃນກໍລະນີມີອຸປະຕິເຫດເກີດຂຶ້ນຢູ່ໃນໂຮງງານ, ມີການຮ້ອງຟ້ອງ, ສ້າງຄວາມອັບປະໂຫຍດ ຫລື ກໍ່ຄວາມເສຍຫາຍຕໍ່ຊັບສິນຂອງປະຊາຊົນ ແລະ ເປັນຜົນກະທົບຕໍ່ສິ່ງແວດລ້ອມສູງ. ເພື່ອເກັບກໍາສະພາບຄວາມເປັນຈິງ ແລະ ຫາວິທີແກ້ໄຂຕໍ່ບັນຫາດັ່ງກ່າວ, ເຈົ້າໜ້າທີ່ກວດກາໂຮງງານມີຄວາມຈໍາເປັນຕ້ອງໄດ້ດໍາເນີນການກວດກາ ຢ່າງຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ໂຮງງານ ຊາບລ່ວງໜ້າ.

### ມາດຕາ 11. ຮູບແບບຂອງບັດເຈົ້າໜ້າທີ່ກວດກາໂຮງງານ

ບັດກວດກາໂຮງງານມີຂະໜາດຄວາມກວ້າງ 60 ມິນລີແມັດ, ຍາວ 95 ມິນລີແມັດ, ຂອບສີແດງ, ພື້ນສີຂາວ ແລະ ມີເງົາຮູບກາໝາຍຊາດຝັງຢູ່, ຕົວໜັງສືສີຟ້າ, ມີອາຍຸການນໍາໃຊ້ 3 ປີ ແລະ ສາມາດຕໍ່ໄດ້ຕາມແຕ່ກໍລະນີ, ຮູບຕິດບັດຂະໜາດ 30x40 ມິນລີແມັດ ແລະ ເນື້ອໃນລະອຽດຂອງບັດ ຄືດັ່ງນີ້:

1. ດ້ານໜ້າ

**ບັດເຈົ້າໜ້າທີ່ກວດກາໂຮງງານ**

ຮູບ ຂະໜາດ 3 x 4

ຊື່ ແລະ ນາມສະກຸນ

.....................................................

ບ່ອນປະຈໍາການ

.....................................................

ເລກລະຫັດ

.....................................................

2. ດ້ານຫລັງ

ກະຊວງອຸດສາຫະກໍາ ແລະ ການຄ້າ ເລກທີ________/ອຄ.ກອກ
ກົມອຸດສາຫະກໍາ ນ.ວ, ວັນທີ________________

- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີວ່າການ ກະຊວງອຸດສາຫະກໍາ ແລະ ການຄ້າ ເລກທີ..............., ລົງວັນທີ.........................

ກົມອຸດສາຫະກໍາ ອອກບັດໃຫ້ທ່ານ..........................................
ຕໍາແໜ່ງ...................................................................
ເປັນເຈົ້າໜ້າທີ່ກວດກາໂຮງງານ ປະຈໍາ....................................
ບັດນີ້ມີອາຍຸການນໍາໃຊ້ຈົນເຖິງວັນທີ.........................................

ຫົວໜ້າກົມອຸດສາຫະກໍາ

**ມາດຕາ 12. ການນໍາໃຊ້ບັດເຈົ້າໜ້າທີ່ກວດກາໂຮງງານ**

1. ບັດເຈົ້າໜ້າທີ່ກວດກາໂຮງງານ ນໍາໃຊ້ໄດ້ສະເພາະແຕ່ເຈົ້າໜ້າທີ່ກວດກາໂຮງງານໃນຂົງເຂດອຸດສາຫະກໍາປຸງແຕ່ງ ແລະ ນໍາໃຊ້ໃນວັນເວລາລັດຖະການເທົ່ານັ້ນ. ໃນກໍລະນີມີຄວາມຈໍາເປັນກວດການອກເວລາລັດຖະການ ຕ້ອງມີເອກະສານມອບໝາຍສະເພາະຈາກຂັ້ນເທິງ ເປັນແຕ່ລະກໍລະນີ ແລະ ບັດເຈົ້າໜ້າທີ່ກວດກາໂຮງງານນີ້ ບໍ່ອະນຸຍາດໃຫ້ຜູ້ອື່ນໃຊ້ແທນຢ່າງເດັດຂາດ.

2. ທຸກຄັ້ງທີ່ລົງກວດກາໂຮງງານ, ເຈົ້າໜ້າທີ່ກວດກາຕ້ອງສະແດງບັດກວດກາໂຮງງານ ແລະ ສະເໜີຈຸດປະສົງໃນການລົງປະຕິບັດວຽກຂອງຕົນ ຕໍ່ເຈົ້າຂອງໂຮງງານ ຫລື ຜູ້ທີ່ຖືກມອບໝາຍໃຫ້ຮັບຜິດຊອບໂຮງງານ. ໃນເວລາລົງປະຕິບັດວຽກງານແຕ່ລະຄັ້ງ ຕ້ອງມີເຈົ້າໜ້າທີ່ກວດກາໂຮງງານ 2 ຄົນ ຂຶ້ນໄປ. ການກວດກາໂຮງງານຫາກມີການພົວພັນກັບຂະແໜງການອື່ນ, ຖ້າມີຄວາມຈໍາເປັນ ອາດຈະເຊີນຜູ້ຕາງໜ້າຈາກຂະແໜງການນັ້ນເຂົ້າຮ່ວມນໍາ ຕາມທີ່ກໍານົດໄວ້ໃນມາດຕາ 48 ຂອງກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ.

3. ໃນກໍລະນີ ບັດກວດກາໂຮງງານ ສູນຫາຍ, ຈີກຂາດ ຫລື ເປື້ອນ ເຈົ້າຂອງບັດຕ້ອງແຈ້ງ ແລະ ລາຍງານເປັນລາຍລັກອັກສອນ ຕໍ່ກົມອຸດສາຫະກໍາ ຫລື ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນ

ຫລວງ ຫລື ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ບ່ອນທີ່ຕົນສັງກັດຢູ່ ເພື່ອອອກບັດໃໝ່ປ່ຽນແທນ.

4. ໃນເວລາຜູ້ທີ່ຖືກແຕ່ງຕັ້ງພົ້ນຈາກການເປັນເຈົ້າໜ້າທີ່ກວດກາໂຮງງານ ຫລື ໄປຮັບຜິດຊອບວຽກງານອື່ນ ຕ້ອງສົ່ງບັດເຈົ້າໜ້າທີ່ກວດກາໂຮງງານຄືນໃຫ້ກົມອຸດສາຫະກຳ ຫລື ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ ຫລື ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ບ່ອນທີ່ຕົນສັງກັດຢູ່.

5. ໃນກໍລະນີ ບັດກວດກາໂຮງງານຫາກໝົດອາຍຸການນຳໃຊ້ ສາມາດຕໍ່ໄດ້ ແຕ່ຕ້ອງມີເງື່ອນໄຂຄົບຖ້ວນຕາມທີ່ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 13. ນະໂຍບາຍຕໍ່ຜູ້ມີຜົນງານ

1. ເຈົ້າໜ້າທີ່ກວດກາໂຮງງານ ຫາກປະຕິບັດຄົບຖ້ວນຕາມໜ້າທີ່ ແລະ ສິດ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້, ໂດຍຖືກຕ້ອງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແລະ ລະບຽບກົດໝາຍອື່ນໆທີ່ກ່ຽວຂ້ອງ; ປະຕິບັດວຽກງານກວດກາໂຮງງານດ້ວຍຄວາມຮັບຜິດຊອບສູງ, ມີຄຸນສົມບັດ ສິນທຳປະຕິວັດ, ສັດຊື່ບໍລິສຸດຕໍ່ໜ້າທີ່ວຽກງານ ແລະ ມີຜົນງານດີເດັ່ນ ຈະໄດ້ຮັບການພິຈາລະນາຍ້ອງຍໍ ແລະ ປະຕິບັດນະໂຍບາຍອື່ນໆຕາມຄວາມເໝາະສົມໃນແຕ່ລະກໍລະນີ ຕາມກົດລະບຽບລັດຖະກອນ.

2. ຜູ້ດຳເນີນກິດຈະການໂຮງງານ ຫາກປະຕິບັດຄົບຖ້ວນ ແລະ ຖືກຕ້ອງຕາມໜ້າທີ່, ສິດ ແລະ ພັນທະຂອງຕົນຕາມຂໍ້ຕົກລົງສະບັບນີ້ ໂດຍຖືກຕ້ອງຕາມມາດຕາ 41 ແລະ 42 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແລະ ລະບຽບກົດໝາຍອື່ນໆທີ່ກ່ຽວຂ້ອງ; ໃຫ້ຄວາມຮ່ວມມືໃນການປະຕິບັດວຽກງານຂອງເຈົ້າໜ້າທີ່ກວດກາໂຮງງານ, ເຄື່ອນໄຫວກິດຈະການໂຮງງານຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ ຂອງການອະນຸຍາດ ແລະ ມີຜົນງານດີເດັ່ນ ຈະໄດ້ຮັບການພິຈາລະນາຍ້ອງຍໍ ແລະ ປະຕິບັດນະໂຍບາຍ ຕາມລະບຽບກົດໝາຍກ່ຽວຂ້ອງ ຕາມແຕ່ລະກໍລະນີ.

### ມາດຕາ 14. ມາດຕະການຕໍ່ຜູ້ລະເມີດ

1. ເຈົ້າໜ້າທີ່ກວດກາໂຮງງານ ຫາກປະຕິບັດບໍ່ຖືກຕ້ອງຕາມໜ້າທີ່ ແລະ ສິດ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ເຊັ່ນ: ນຳໃຊ້ບັດກວດກາໂຮງງານໃນທາງທີ່ບໍ່ຖືກຕ້ອງ, ໃຫ້ຄົນອື່ນສວຍໃຊ້ເພື່ອຫາຜົນປະໂຫຍດ, ເວົ້າຈາບໍ່ສຸພາບ, ຂົ່ມຂູ່ໂຮງງານ, ສ້າງຂໍ້ມູນບໍ່ມີຄວາມຈິງ ເພື່ອຜົນປະໂຫຍດຕົນເອງ. ຂາດຄວາມຮັບຜິດຊອບຕໍ່ວຽກງານກວດກາໂຮງງານ, ຂາດຄຸນສົມບັດ ສິນທຳປະຕິວັດ, ບໍ່ສັດຊື່ບໍລິສຸດຕໍ່ໜ້າທີ່ວຽກງານ, ຮັບສິນບົນ ແລະ ສ້າງຄວາມເສັຍຫາຍຕໍ່ຊັບສິນ ແລະ ຜົນປະໂຫຍດຂອງລັດ, ຂອງໂຮງງານ ແລະ ປະຕິບັດຜິດຕໍ່ກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແລະ ລະບຽບກົດໝາຍອື່ນໆທີ່ກ່ຽວຂ້ອງ ຈະຖືກປະຕິບັດວິໄນຕາມກົດລະບຽບລັດຖະກອນ ແລະ ດຳເນີນຄະດີ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ.

2. ຜູ້ດຳເນີນກິດຈະການໂຮງງານ ຫາກບໍ່ປະຕິບັດຖືກຕ້ອງຕາມໜ້າທີ່, ສິດ ແລະ ພັນທະຂອງຕົນຕາມຂໍ້ຕົກລົງສະບັບນີ້ ແລະ ບໍ່ສອດຄ່ອງຕາມມາດຕາ 41 ແລະ 42 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແລະ ຜິດຕໍ່ລະບຽບກົດໝາຍອື່ນໆທີ່ກ່ຽວຂ້ອງ; ບໍ່ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ກວດກາໂຮງງານ, ເຄື່ອນໄຫວກິດຈະການໂຮງງານ ບໍ່ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ ຂອງການອະນຸຍາດ ແລະ ອື່ນໆ ຈະຖືກປະຕິບັດມາດຕະການກ່າວເຕືອນ, ປັບໃໝ, ຖອນໃບອະນຸຍາດດຳເນີນກິດຈະການໂຮງງານ, ປະຕິ

ບັດມາດຕະການທາງອາຍາ ຕາມມາດຕາ 23, 24, 25, 26 ແລະ 27 ຂອງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ເລກທີ 1301/ອຄ, ລົງວັນທີ 30/7/07 ແລະ ດຳເນີນຄະດີ ຕາມລະບຽບກົດໝາຍກ່ຽວຂ້ອງ ຕາມແຕ່ລະກໍລະນີ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

### ມາດຕາ 15. ການຈັດຕັ້ງປະຕິບັດ

ມອບໃຫ້ກົມອຸດສາຫະກຳ ເປັນຜູ້ຊີ້ນຳ, ຕິດຕາມ ກວດກາ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ໂດຍໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແລະ ເປັນເອກະພາບກັບລະບຽບກົດໝາຍ ທີ່ກ່ຽວຂ້ອງ.

ມອບໃຫ້ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ ມີໜ້າທີ່ເຜີຍແຜ່ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດ, ໜ້າທີ່ ແລະ ສິດ ຂອງຕົນໃຫ້ໄດ້ຮັບຜົນດີ ແລະ ເຂັ້ມງວດ.

### ມາດຕາ 16. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ກຳນົດຂອງກະຊວງ ວ່າດ້ວຍການກຳນົດແບບບັດປະຈຳຕົວຂອງເຈົ້າໜ້າທີ່ກວດກາໂຮງງານ ເລກທີ 105/ອຫ, ລົງວັນທີ 21/2/1992.

ລັດຖະມົນຕີວ່າການ
ກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ